# Curriculum on Basic Skills in legal profession for enforcement and court judgement (Laos)

## Examination
## ສອບເສັງ
**( 20 Questions, 45 minutes )**

**NAME:___________________________________**

**CLASS:__________________________________**

**DATE:___________________________________**

- **ຈົ່ງເລືອກຄຳຕອບທີ່ຖືກຕ້ອງດ້ວຍເຄື່ອງໝາຍ ☒ , ຂໍ້ລະ 0,5 ຄະແນນ, ລວມ 10 ຄະແນນ.**

**1. ຂໍ້ໃດຖືກທີ່ສຸດລຸ່ມນີ້, ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ?**

☐ **a)** ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ຫ້ອງການປະຕິບັດຄຳຕັດສິນຂຂອງສານ, ໜ່ວຍງານປະຕິບັດຄຳຕັດສິນຂອງສານ;

☐ **b)** ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ພະແນກຍຸຕິທຳ, ຫ້ອງການຍຸຕິທຳ;

☐ **c)** ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ພະແນກຍຸຕິທຳ, ຫ້ອງການປະຕິບັດຄຳຕັດສິນຂອງສານ.

**2. ຂໍ້ໃດຖືກທີ່ສຸດລຸ່ມນີ້, ອົງການປະຕິບັດຄຳຕັດສິນຂອງສານ ?**

☐ **a)** ຫ້ອງການປະຕິບັດຄຳຕັດສິນຂອງສານ, ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ;

☐ **b)** ຫ້ອງການປະຕິບັດຄຳຕັດສິນຂອງສານ, ໜ່ວຍງານປະຕິບັດຄຳຕັດສິນຂອງສານ;

☐ **c)** ຫ້ອງການປະຕິບັດຄຳຕັດສິນຂອງສານ, ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ.

**3. ຂໍ້ໃດຖືກລຸ່ມນີ້, ໃຜເປັນຜູ້ແຕ່ງຕັ້ງຫົວໜ້າຫ້ອງ ແລະ ຮອງຫົວໜ້າຫ້ອງການປະຕິບັດຄຳຕັດສິນຂອງສານ?**

☐ **a)** ຫົວໜ້າພະແນກຍຸຕິທຳ ບ່ອນຫ້ອງການປະຕິບັດຄຳຕັດສິນຂອງສານຕັ້ງຢູ່;

☐ **b)** ລັດຖະມົນຕີກະຊວງຍຸຕິທຳ;

☐ **c)** ເຈົ້າແຂວງບ່ອນຫ້ອງການປະຕິບັດຄຳຕັດສິນຂອງສານຕັ້ງຢູ່.

4. **ຂໍ້ໃດຖືກລຸ່ມນີ້, ພາກສ່ວນໃດມີສິດອຳນາດໃນການ ອອກຄຳສັ່ງ ປ່ຽນແປງ, ໂຈະ, ຍົກເລີກ ຫຼື ລຶບລ້າງ ການປະຕິບັດຄຳຕັດສິນຂອງຫ້ອງການ ຫຼື ໜ່ວຍງານປະຕິບັດຄຳຕັດສິນຂອງສານ?**
   - ☐ **a)** ພະແນກຍຸຕິທຳ;
   - ☐ **b)** ກະຊວງຍຸຕິທຳ;
   - ☐ **c)** ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ.

5. **ຂໍ້ໃດຖືກທີ່ສຸດລຸ່ມນີ້, ປະເພດຕິກຳແນວໃດທີ່ອົງການປະຕິບັດຄຳຕັດສິນຂຂອງສານນຳມາຈັດຕັ້ງປະຕິບັດ?**
   - ☐ **a)** ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນ, ຄຳຕົກລົງ;
   - ☐ **b)** ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ;
   - ☐ **c)** ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ, ຄຳຕົກລົງ.

6. **ໃຜເປັນຜູ້ແຕ່ງຕັ້ງຫົວໜ້າກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ?**
   - ☐ **a)** ລັດຖະມົນຕີກະຊວງຍຸຕິທຳ;
   - ☐ **b)** ຄະນະຈັດຕັ້ງສູນກາງພັກປະຊາຊົນປະຕິວັດລາວ;
   - ☐ **c)** ນາຍົກລັດຖະມົນຕີ.

7. **ໃຜເປັນຜູ້ແຕ່ງຕັ້ງຮອງຫົວໜ້າກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ?**
   - ☐ **a)** ລັດຖະມົນຕີກະຊວງຍຸຕິທຳ;
   - ☐ **b)** ນາຍົກລັດຖະມົນຕີ;
   - ☐ **c)** ຄະນະຈັດຕັ້ງສູນກາງພັກປະຊາຊົນ ປະຕິວັດລາວ.

8. **ໜຶ່ງໃນເງື່ອນໄຂຂອງການເປັນພະນັກງານປະຕິບັດຄຳຕັດສິນຂອງສານຢູ່ ສປປ ລາວ ຕ້ອງເປັນພົນລະເມືອງລາວທີ່ມີອາຍຸຈັກປີ?**
   - ☐ **a)** 20 ຂື້ນໄປ;
   - ☐ **b)** 18 ປີ ຂຶ້ນໄປ;
   - ☐ **c)** 19 ປີຂຶ້ນໄປ.

9. **ຜູ້ທີ່ຈະໄດ້ຮັບພິຈາລະນາໃຫ້ເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຢູ່ ສປປ ລາວ ຕ້ອງມີຄວາມຮູ້ຄືແນວໃດ( ຕາມກົດໝາຍປະຕິບັດຄຳຕັດສິນຂອງສານທີ່ກຳລັງມີຜົນສັກສິດ)?**
   - ☐ **a)** ມີຄວາມຮູ້ກົດໝາຍຊັ້ນກາງຂຶ້ນໄປ ຫລື ໄດ້ຮັບການບຳລຸງວິຊາກົດໝາຍ ແລະໄດ້ຮັບການຝຶກອົບຮົມກ່ຽວກັບວຽກງານການປະຕິບັດຄຳຕັດສິນຂອງສານ;
   - ☐ **b)** ມີຄວາມຮູ້ກົດໝາຍຊັ້ນສູງຂຶ້ນໄປ ຫລື ໄດ້ຮັບການບຳລຸງວິຊາກົດໝາຍ ແລະໄດ້ຮັບການຝຶກອົບຮົມກ່ຽວ

ກັບວຽກງານການປະຕິບັດຄຳຕັດສິນຂອງສານ;

☐ **c)** ມີຄວາມຮູ້ກົດໝາຍຊັ້ນປະລິນຍາຕີຂຶ້ນໄປ ຫລື ໄດ້ຮັບການບຳລຸງວິຊາກົດໝາຍ ແລະໄດ້ຮັບການຝຶກອົບຮົມກ່ຽວກັບວຽກງານການປະຕິບັດຄຳຕັດສິນຂອງສາ.

**10. ຂໍ້ໃດຖືກທີ່ສຸດລຸ່ມນີ້, ລັດຖະທຳມະນູນແຫ່ງ ສປປ ລາວ ໄດ້ກຳນົດ?**

☐ **a)** " ຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນທຸກອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງທຸກຄົນຕ້ອງເຄົາລົບ, ບຸກຄົນ ແລະ ອົງການຈັດຕັ້ງທີ່ມີສ່ວນກ່ຽວຂ້ອງຕ້ອງປະຕິບັດຢ່າງເຂັ້ມງວດ";

☐ **b)** " ຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນທຸກອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ,ແລະ ອົງການຈັດຕັ້ງທີ່ມີສ່ວນກ່ຽວຂ້ອງຕ້ອງປະຕິບັດຢ່າງເຂັ້ມງວດ";

☐ **c)** " ຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນທຸກອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດຕ້ອງປະຕິບັດຢ່າງເຂັ້ມງວດ".

**11. ຂໍ້ໃດຖືກທີ່ສຸດລຸ່ມນີ້, ການຈັດຕັ້ງປະຕິບັດຄຳຕັດສິນຂອງສານຕົ້ນຕໍເພື່ອຫຍັງ?**

☐ **a)** ຟື້ນຟູສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ພົນລະເມືອງ ທີ່ຖືກລະເມີດ ຫຼື ສູນເສັຍໄປ;

☐ **b)** ຟື້ນຟູສິດ ແລະ ຜົນປະໂຫຍດຂອງລັດ, ແລະ ພົນລະເມືອງ ທີ່ຖືກລະເມີດ ຫຼື ສູນເສັຍໄປ;

☐ **c)** ຟື້ນຟູສິດ ແລະ ຜົນປະໂຫຍດຂອງລວມໝູ່ ແລະ ພົນລະເມືອງ ທີ່ຖືກລະເມີດ ຫຼື ສູນເສັຍໄປ.

**12. ຂໍ້ໃດຖືກທີ່ສຸດລຸ່ມນີ້, ຈັນຍາບັນວິຊາຊີບປະຕິບັດຄຳຕັດສິນຂອງສານ ?**

☐ **a)** ແມ່ນຫຼັກການປະພຶດຂອງພະນັກງານປະຕິບັດຄຳຕັດສິນຂອງສານ ທີ່ສະແດງໃຫ້ເຫັນເຖິງຄວາມ ເຄົາລົບວິຊາຊີບປະຕິບັດຄຳຕັດສິນຂອງສານ;

☐ **b)** ແມ່ນຫຼັກການປະພຶດຂອງພະນັກງານປະຕິບັດຄຳຕັດສິນຂອງສານ ທີ່ສະແດງໃຫ້ເຫັນເຖິງຄວາມຮັກ ແລະເຄົາລົບວິຊາຊີບປະຕິບັດຄຳຕັດສິນຂອງສານ;

☐ **c)** ແມ່ນຫຼັກການປະພຶດຂອງພະນັກງານປະຕິບັດຄຳຕັດສິນຂອງສານ ທີ່ສະແດງໃຫ້ເຫັນເຖິງຄວາມຮັກວິຊາຊີບປະຕິບັດຄຳຕັດສິນຂອງສານ.

**13. ຂໍ້ໃດຖືດທີ່ສຸດລຸ່ມນີ້, ຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ?**

☐ **a)** ຜູ້ຊ່ຽວຊານ ຫຼື ນິຕິບຸກຄົນ, ຄະນະກຳມະການ;

☐ **b)** ຜູ້ຖືກປະຕິບັດຄຳຕັດສິນຂອງສານ;

☐ **c)** ຄູ່ຄວາມ.

**14. ຂໍ້ໃດຖືກທີ່ສຸດລຸ່ມນີ້, ຜູ້ຈັດຕັ້ງປະຕິບັດຄຳຕັດສິນຂອງສານ?**

☐ **a)** ຄູ່ຄວາມ;
☐ **b)** ພະນັກງານປະຕິບັດຄຳຕັດສິນຂອງສານ;
☐ **c)** ຄູ່ຄວາມ, ພະນັກງານປະຕິບັດຄຳຕັດສິນຂອງສານ.

**15. ຂໍ້ໃດຖືກທີ່ສຸດລຸ່ມນີ້, ຜູ້ປະຕິບັດຄຳຕັດສິນຂອງສານ?**

☐ **a)** ຄູ່ຄວາມ;
☐ **b)** ພະນັກງານປະຕິບັດຄຳຕັດສິນຂອງສານ;
☐ **c)** ຄູ່ຄວາມ, ພະນັກງານປະຕິບັດຄຳຕັດສິນຂອງສານ.

**16. ການຮ່ວມມືສາກົນໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານຂອງ ສປປ ລາວແມ່ນ ?**

☐ **a)** ການນຳເອົາຜົນຂອງການໄກ່ເກັ່ຍ, ຄຳຕັດສິນ, ຄຳພິພາກສາຂອງສານຕ່າງປະເທດທີ່ຖືກຮັບຮູ້ຈາກສານປະຊາຊົນສູງສຸດຂອງ ສປປ ລາວ ມາຈັດຕັ້ງປະຕິບັດຕາມກົດໝາຍ ໂດຍສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ;

☐ **b)** ການນຳເອົາ ຄຳຕັດສິນ, ຄຳພິພາກສາຂອງສານຕ່າງປະເທດທີ່ຖືກຮັບຮູ້ຈາກສານປະຊາຊົນສູງສຸດຂອງ ສປປ ລາວ ມາຈັດຕັ້ງປະຕິບັດຕາມກົດໝາຍ ໂດຍສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ;

☐ **c)** ການນຳເອົາຜົນຂອງການໄກ່ເກັ່ຍ, ຄຳຕັດສິນ, ຂອງສານຕ່າງປະເທດທີ່ຖືກຮັບຮູ້ຈາກສານປະຊາຊົນສູງສຸດຂອງ ສປປ ລາວ ມາຈັດຕັ້ງປະຕິບັດຕາມກົດໝາຍ ໂດຍສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

**17. ກໍລະນີ ສປປ ລາວ ບໍ່ມີສົນທິສັນຍາ ແລະ ສັນຍາສາກົນ ກັບຕ່າງປະເທດກ່ຽວຂ້ອງນັ້ນ, ອີງການປະຕິບັດຄຳຕັດສິນຂອງສານ ຂອງ ສປປ ລາວ ຕ້ອງປະຕິບັດບົນຫຼັກການຄືແນວໃດ?**

☐ **a)** ຕ້ອງປະຕິບັດບົນຫຼັກການຮ່ວມມືຊຶ່ງກັນ ແລະ ກັນ ຊຶ່ງບໍ່ຂັດກັບລັດຖະທຳມະນູນ ຂອງ ສປປ ລາວ;
☐ **b)** ຕ້ອງປະຕິບັດບົນຫຼັກການຮ່ວມມືສາກົນ, ຮ່ວມມືຊຶ່ງກັນ ແລະ ກັນ ຊຶ່ງບໍ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍຂອງ ສປປ ລາວ;
☐ **c)** ຕ້ອງປະຕິບັດບົນຫຼັກການຮ່ວມມືສາກົນ, ຮ່ວມມືຊຶ່ງກັນ ແລະ ກັນ ຊຶ່ງບໍ່ຂັດກັບ ກົດໝາຍຂອງ ສປປ ລາວ.

**18. ສປປ ລາວ ມີສົນທິສັນຍາຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານຍຸຕິທຳກ່ຽວກັບທາງແພ່ງ ແລະ ອາຍາ ກັບ ສສ ຫວຽດນາມ ໃນວັນທີ, ເດືອນ, ປີ ໃດ?**

☐ **a)** 6/8/1998;

☐ **b)** 6/7/1998;
☐ **c)** 6/9/1998.

**19.** ຂໍ້ໃດຖືກທີ່ສຸດລຸ່ມນີ້, ອົງການຕິດຕາມກວດກາພາຍນອກ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ?

☐ **a)** ສະພາແຫ່ງຊາດ;
☐ **b)** ອົງການໄອຍະການປະຊາຊົນສູງສຸດ;
☐ **c)** ສະພາແຫ່ງຊາດ, ອົງການໄອຍະການປະຊາຊົນສູງສຸດ.

**20.** ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານຢູ່ ສປປ ລາວ ທີ່ກຳລັງມີຜົນສັກສິດໃນປັດຈຸບັນແມ່ນກົດໝາຍໄດ້ສະບັບປີ ໃດ?

☐ **a)** 2009;
☐ **b)** 2018;
☐ **c)** 2008.

# Answer Key

| | | | | | | | |
|---|---|---|---|---|---|---|---|
| **1.** | **b** | **2.** | **b** | **3.** | **b** | **4.** | **c** |
| **5.** | **c** | **6.** | **c** | **7.** | **a** | **8.** | **a** |
| **9.** | **a** | **10.** | **a** | **11.** | **a** | **12.** | **b** |
| **13.** | **a** | **14.** | **b** | **15.** | **a** | **16.** | **a** |
| **17.** | **b** | **18.** | **b** | **19.** | **c** | **20.** | **c** |